ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

--===000===--

ກະຊວງກະສິກຳ ແລະປ່າໄມ້

ເລກທີ 0104 /ກປ.2002

ວຽງຈັນ, ວັນທີ 31 JAN 2002

# ຂໍ້ຕົກລົງ

## ຂອງລັດຖະມົນຕີ ວ່າດ້ວຍການອະນຸມັດນຳໃຊ້

## " ລະບຽບການ ວ່າດ້ວຍການຂໍອະນຸຍາດ ດຳເນີນທຸລະກິດ ຂອງບໍລິສັດ ຊົນລະປະທານ "

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 86/ນຍ ລົງວັນທີ 22 /06/ 1999 ວ່າດ້ວຍ ການຈັດຕັ້ງ ແລະການເຄື່ອນໄຫວຂອງກະຊວງ ກະສິກຳ ແລະປ່າໄມ້.
- ອີງຕາມ ການຄົ້ນຄວ້າຂອງສະພາວິທະຍາສາດເຕັກນິກກະສິກຳ ແລະ ປ່າໄມ້, ໃນວັນທີ 26/ 01 / 2002.
- ອີງຕາມສະໂນດນຳສົ່ງ ສະບັບເລກທີ 0078 /ຊປທ.2002 ລົງວັນທີ 24/ 01/ 2002.

ກະຊວງກະສິກຳ ແລະ ປ່າໄມ້ ຈິ່ງຕົກລົງ:

**ມາດຕາ 1:** ອະນຸມັດນຳໃຊ້ ລະບຽບການວ່າດ້ວຍການຂໍອະນຸຍາດ ດຳເນີນທຸລະກິດ ບໍລິສັດ ກໍ່ສ້າງ ແລະສ້ອມແປງ ຊົນລະປະທານ, ບໍລິສັດສຳຫຼວດ-ອອກແບບ ຊົນລະປະທານ ແລະ ຂອງບໍລິສັດ ກວດກາຄຸນນະພາບການກໍ່ສ້າງ ຊົນລະປະທານ.

**ມາດຕາທີ 2 :** ໃຫ້ກົມຊົນລະປະທານ ປະສານສົມທົບກັບພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ກຳແພງນະຄອນ ແລະເຂດພິເສດ ເພື່ອຈັດຕັ້ງປະຕິບັດໃຫ້ໄດ້ຮັບໝາກຜົນເປັນຢ່າງດີ.

**ມາດຕາ 3 :** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຈ. ລັດຖະມົນຕີ ວ່າການກະຊວງກະສິກຳ ແລະປ່າໄມ້

ກະຊວງກະສິກຳແລະປ່າໄມ້ ລັດຖະມົນຕີ

ສີຕາເຫັ້ງ ຣາຊະພົນ

ບ່ອນນຳສົ່ງ:

| | |
|---|---|
| - ຫ້ອງການ ກະຊວງກະສິກຳແລະປ່າໄມ້ | 1 ສະບັບ. |
| - ກົມຈັດຕັ້ງ ແລະພະນັກງານ | 1 ສະບັບ. |
| - ກົມຊົນລະປະທານ | 1ສະບັບ |
| - ກົມແຜນການ | 1ສະບັບ |
| - ສະພາວິທະຍາສາດເຕັກນິກກະສິກຳແລະປ່າໄມ້ | 1 ສະບັບ |
| - ເກັບມ້ຽນ | 1 ສະບັບ |

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ.

----==000==-----

*ກະຊວງ ກະສິກຳ ແລະ ປ່າໄມ້*

*ກົມຊົນລະປະທານ*

# ລະບຽບການ

## ວ່າດ້ວຍການ ຂໍອະນຸຍາດດຳເນີນ ທຸລະກິດຂອງບໍລິສັດ ກໍ່ສ້າງ ແລະ ສ້ອມແປງ ຊົນລະປະທານ "ບກສຊ"

- ອີງຕາມ ດຳລັດ ນາຍົກລັດຖະມົນຕີ ສະບັບເລກທີ 89 /ນຍ, ລົງວັນທີ 22 / 6 /1999 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງ ກະສິກຳ ແລະ ປ່າໄມ້.
- ອີງຕາມ ກົດໝາຍວ່າດ້ວຍທຸລະກິດ ສະບັບເລກທີ 05/94/ສພຊ, ລົງວັນທີ 18/7/94.
- ອີງຕາມ ພະລະບົດບາດ ແລະ ໜ້າທີ່ຂອບເຂດສິດ ຂອງກົມຊົນລະປະທານ ສະບັບເລກທີ 1393/ກປ.ຈຕ.99 ລົງວັນທີ 28 ກໍລະກົດ 1999.

ເພື່ອເຮັດໃຫ້ວຽກງານກໍ່ສ້າງ ແລະ ສອ້ມແປງຊົນລະປະທານໃນຂອບເຂດທົ່ວປະເທດກ້າວເຂົ້າສູ່ລະບົບລະບຽບ,ຖືກຕ້ອງຕາມຂໍ້ກຳນົດໝາຍ, ມາດຖານເຕັກນິກທີ່ໄດ້ວາງອອກໃຫ້ປະກົດຜົນເປັນຈິງ.

ກະຊວງກະສິກຳ ປ່າໄມ້ ກົມຊົນລະປະທານ ຈຶ່ງໄດ້ອອກລະບຽບການເບື້ອງຕົ້ນ, ວ່າດ້ວຍການອະນຸຍາດສ້າງຕັ້ງ ບໍລິສັດ ກໍ່ສ້າງ ແລະ ສ້ອມແປງຊົນລະປະທານ.

## ພາກທີ່ I.
## ວ່າດ້ວຍຫຼັກການທົ່ວໄປ.

ມາດຕາ 1: ຂອບເຂດການນຳໃຊ້ລະບຽບການ.

ລະບຽບການສະບັບນີ້ໃຊ້ໄດ້ສະເພາະສຳລັບທຸລະກິດ ຂະແໜງການຊົນລະປະທານ ບໍລິສັດ ກໍ່ສ້າງແລະ ສ້ອມແປງ ຊົນລະປະທານ ຊຶ່ງເອີ້ນຫຍໍ້ວ່າ " ບກສຊ".

ມາດຕາ 2: ການຂໍອະນຸຍາດ ດຳເນີນທຸລະກິດ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ( ນັບທັງຄົນລາວ ແລະ ຊາວຕ່າງດ້າວ ) ທີ່ຕັ້ງພູມລຳເນົາຢູ່ ສ ປ ປ ລາວ ຫຼື ຢູ່ຕ່າງປະເທດ ແລະບໍລິສັດຕ່າງປະເທດ ຫຼື ຄົນຕ່າງປະເທດ ທີ່ມີຈຸດປະສົງຢາກດຳເນີນທຸລະກິດ ກໍ່ສ້າງ ແລະ ສອ້ມແປງ ລະບົບຊົນລະປະທານຢູ່ ສປປ

ລາວ, ລວັນແຕ່ຕ້ອງໄດ້ຂໍອະນຸຍາດຈາກ ກະຊວງ ກະສິກຳແລະປ່າໄມ້ ກົມຊົນລະປະທານ ແລະ ຂະແໜງການຊົນລະປະທານແຂວງ, ກຳແພງ ຫຼືເຂດພິເສດ.

**ມາດຕາ 3:** ການຂໍໃບອະນຸຍາດ ດຳເນີນທຸລະກິດ.

ຫຼັງຈາກ ຂະແໜງການຄ້າ ໄດ້ອອກໃບທະບຽນວິສະຫະກິດ ແລະຂະແໜງສ່ວຍສາອາກອນອອກໃບທະບຽນອາກອນພາຍໃນໃຫ້ແລ້ວ ຕ້ອງປະກອບເອກະສານ ຂໍອະນຸຍາດເພື່ອ ດຳເນີນ ທຸລະກິດທີ່ໄດ້ລະບຸ ໄວ້ຕາມ ມາດຕາ 9 ຂ້າງລຸ່ມນີ້ ໃຫ້ຄົບຖ້ວນແລະຖືກຕ້ອງ.

**ມາດຕາ 4:** ຂັ້ນຕອນການຂໍໃບອະນຸຍາດ:

ເມື່ອປະກອບເອກະສານ ຄົບຖ້ວນແລະຖືກຕ້ອງຕາມ ມາດຕາ3 ແລ້ວ, ຕ້ອງນຳສະເໜີໃຫ້ ກະຊວງ ກະສິກຳ ແລະປ່າໄມ້ ກົມຊົນລະປະທານ ຫຼືຂະແໜງການແຂວງ, ກຳແພງນະຄອນ ແລະເຂດພິເສດ ຄົ້ນຄວ້າເພື່ອອອກໃບອະນຸຍາດໃຫ້.

**ມາດຕາ 5:** ຂອບເຂດ ແລະ ອາຍຸການນຳໃຊ້ໃບອະນຸຍາດ.

ໃບອະນຸຍາດ ດຳເນີນທຸລະກິດ ແມ່ນໃຊ້ໄດ້ໃນຂອບເຂດທົ່ວປະເທດ ແລະ ໃຊ້ສະເພາະແຕ່ຜູ້ທີ່ໄດ້ຮັບການອະນຸຍາດເທົ່ານັ້ນ. ຫ້າມໂອນ ຫຼື ມອບໃຫ້ຜູ້ອື່ນຢືມໃຊ້ໃບອະນຸຍາດດັ່ງກ່າວ. ໃບອະນຸຍາດ ດຳເນີນທຸລະກິດ ມີອາຍຸການນຳໃຊ້ດັ່ງນີ້:

- ໃບອະນຸຍາດ ດຳເນີນທຸລະກິດ ຂອງຂະແໜງ ຊົນລະປະທານ ມີອາຍຸການນຳໃຊ້ກຳນົດ 1 ປີ (ນັບແຕ່ມື້ອອກໃບອະນຸຍາດເປັນຕົ້ນໄປ). ເມື່ອໝົດອາຍຸການ, ຖ້າບໍ່ມີບັນຫາໃດໆກັບຂະແໜງການກ່ຽວຂ້ອງກໍ່ສາມາດຕໍ່ໄດ້ແຕ່ລະປີ. ເມື່ອໄດ້ໃບອະນຸຍາດ, ຕອ້ງໄດ້ ດຳເນີນ ທຸລະກິດ ຕາມເປົ້າໝາຍ ໂດຍໃຫ້ສອດຄ່ອງກັບລະບຽບກົດໝາຍຂອງລັດ ແລະຢູ່ໃນການຄຸ້ມຄອງ ກວດກາຂອງລັດ ຕາມພາລະໜ້າທີ່ ຂອງພາກສວ່ນກ່ຽວຂອ້ງ.
- ການຍື່ນ ເອກະສານ ຂໍຕໍ່ໃບອະນຸຍາດ ດຳເນີນ ທຸລະກິດ ຂອງບໍລິສັດແມ່ນຕ້ອງໄດ້ປະຕິບັດພາຍໃນ 15 ວັນ ນັບແຕ່ມື້ໝົດກຳນົດການນຳໃຊ້ ໃບອະນຸຍາດດັ່ງກ່າວ ຖ້າກາຍກຳນົດນີ້ແລ້ວ ທາງຂະແໜງການຈະບໍ່ພິຈາລະນາ ນອກຈາກມີເຫດຜົນພຽງພໍ ແຕ່ກໍ່ບໍ່ໃຫ້ ກາຍ30 ວັນ.

## *ພາກທີ II.*

## ວ່າດວ້ຍເງື່ອນໄຂກ່ຽວກັບການສ້າງຕັ້ງບໍລິສັດຊົນລະປະທານ ການປະກອບເອກະສານ ຂໍໃບອະນຸຍາດສ້າງຕັ້ງ ແລະການຈັດຊັ້ນ,ຂັ້ນຄູ້ມຄອງ.

## ມາດຖານວິຊາການ.

"ບກສຊ" ຕອ້ງມີວິສະວະກອນ ຊົນລະປະທານທີ່ມີບົດຮຽນ ແລະປະສົບການຕົວຈິງຢ່າງໜ້ອຍແຕ່ 5ປີ ຂຶ້ນໄປ, ສ່ວນຈຳນວນວິສະວະກອນຊົນລະປະທານ ແມ່ນ ໄດ້ລະບຸໄວ້ໃນຕາຕະລາງ. ເພື່ອຮັບປະກັນ ການກໍ່ສ້າງ-ສອ້ມແປງ ລະບົບຊົນລະປະທານໃຫ້ຖືກຕ້ອງຕາມມາດຖານເຕັກນິກ ທີ່ທາງຂະແໜງການຊົນລະປະທານໄດ້ວາງອອກ (ກົມຊົນລະປະທານ).

ຄະນະບໍລິສັດ ຕ້ອງມີວິຊາສະເພາະ ຂະແໜງຊົນລະປະທານ ຢ່າງນ້ອຍ 1 ຄົນ, ຫົວໜ້າ ບໍລິສັດ ຕ້ອງແມ່ນວິສະວະກອນ ຊົນລະປະທານ ຫຼືເປັນຜູ້ທີ່ມີ ຄຸນສົມບັດ ແລະຄວາມສາມາດ ໃນການຈັດການ.

ພະນັກງານ ວິຊາການ ມີສິດເຮັດວຽກ ນຳບໍລິສັດດຽວໂດຍອີງໃສ່ສັນຍາຜູກພັນ ລະຫ່ວາງຜູ້ກ່ຽວ ແລະບໍລິສັດ.

## ທີ່ຕັ້ງສຳນັກງານ.

"ບກສຊ" ຕອ້ງມີສຳນັກງານ ຂອງບໍລິສັດຢ່າງເປັນທາງການ ແລະມີປ້າຍຕິດຊື່ບໍລິສັດ ເລກທີ່ເຮືອນ, ຊື່ຖະໜົນ, ບ້ານ, ເມືອງ, ແຂວງ. ໂທລະສັບ,ໂທລະສານ,ອື່ນໆ ທີ່ຈຳເປັນຢູ່ທີ່ ສປປ ລາວ.

## ທຶນເພື່ອການ ດຳເນີນທຸລະກິດ.

"ບກສຊ" ຕອ້ງມີທຶນຮອນພຽງພໍ ແລະ ຮັບປະກັນໃນການດຳເນີນ ກິດຈະການຕົນເອງເຊັ່ນ: ຊັບສົມບັດຄົງທີ່, ພາຫະນະກົນຈັກຕ່າງໆ ( ກົນຈັກໜັກ, ກົນຈັກເບົາ ), ເຄື່ອງມືກໍ່ສ້າງ ແລະ ສ້ອມແປງຊົນລະປະທານ,ເຄື່ອງກວດກາຄຸນນະພາບການກໍ່ສ້າງ, ເຄື່ອງທົດສອບເບຕົງ, ດິນອັດແໜ້ນ ແລະ ອຸປະກອນຮັບໃຊ້ອື່ນໆ ທີ່ຈຳເປັນຕໍ່ວຽກງານກໍ່ສ້າງສອ້ມແປງ. ທຶນໝູນວຽນ 30 % ຂອງມູນຄ່າຊັບສົມບັດຄົງທີ່ ຕາມລາຍການລະບຸໄວ້ໃນຕາຕະລາງ ຊັ້ນຂອງບໍລິສັດ.

## ການປະກອບ ເອກະສານ ຂໍອະນຸຍາດ ດຳເນີນ "ບກສຊ".

ຕ້ອງປະກອບເອກະສານດັ່ງລຸ່ມນີ້:

1. ໃບຄຳຮອ້ງຂໍສ້າງຕັ້ງບໍລິສັດ.
2. ໃບຊີວະປະຫວັດຫຍໍ້ ( ຫົວໜ້າບໍລິສັດ )
3. ໃບແຈ້ງໂທດ ເລກ 3.
4. ສັນຍາສ້າງຕັ້ງວິສະຫະກິດ ( ສຳລັບລັດວິສະຫະກິດປະສົມແລະບໍລິສັດ)
5. ກົດລະບຽບວິສະຫະກິດ.
6. ບົດວິພາກເສດຖະກິດ.
7. ສຳເນົາບັດປະຈຳຕົວ.
8. ຮູບຂະໜາດ 3x4 ຈຳນວນ 4 ໃບ.

9. ໃບປະກາດທາງດ້ານວິຊາການ, ປະສົບການຂອງວິສະວະກອນ ພ້ອມທັງສັນຍາ ຜູກພັນລະຫ່ວາງ ວິຊາການ ແລະບໍລິສັດ.
10. ໃບຢັ້ງຢືນຜົນງານ ໃນໄລຍະຜ່ານມາ ຂອງວິສະວະກອນ ຫຼື ວິສະຫະກິດ.
11. ໃບອະນຸຍາດລົງທຶນ ( ສຳລັບຄົນຕ່າງປະເທດ ).
12. ໃບຢັ້ງຢືນຖານະການເງິນຈາກທະນາຄານ.
13. ໃບສະຫລຸບຊັບສິນ-ໜີ້ສິນ ( ຖ້າມີ )
14. ບັນຊີຊັບສິນບັດຄົງທີ່ ຕະຫຼອດເຖິງອຸປະກອນເຄື່ອງມື ພ້ອມດ້ວຍການຢັ້ງຢືນກຳມະສິດຈາກອົງການກ່ຽວຂ້ອງ ແລະ ພະແນກຄົມມະນາຄົມ.
15. ບັນຊີລູກໜີ້.
16. ໃບມອບສິດໃນການພົວພັນ ຂໍອະນຸຍາດດຳເນີນທຸລະກິດຂະແໜງ ຊົນລະປະທານ ( ໃນກໍລະນີຫົວໜ້າບໍລິສັດບໍ່ໄດ້ມາພົວພັນເອງ).
17. ບັນຊີພະນັກງານ ແລະໂຄງຮ່າງການຈັດຕັ້ງ ຂອງບໍລິສັດ.
18. ແຜນວາດທີ່ຕັ້ງສຳນັກງານບໍລິສັດ.

**ມາດຕາ 10:** ການປະກອບ ເອກະສານ ຂໍຕໍ່ໃບອະນຸຍາດເພື່ອ ດຳເນີນຂະແໜງ ຊົນລະປະທານ ຈະຕ້ອງໄດ້ປະກອບເອກະສານດັ່ງລຸ່ມນີ້ :

1. ໃບຄຳຮ້ອງຂໍຕໍ່ໃບອະນຸຍາດ ເຖິງກະຊວງກະສິກຳ ແລະປ່າໄມ້ ກົມຊົນລະປະທານ ຫຼື ພະແນກກະສິກຳ ແລະປ່າໄມ້ ແຂວງ, ກຳແພງ ແລະເຂດ ພິເສດ.
2. ໃບອະນຸຍາດ ເຄື່ອນໄຫວ ທຸລະກິດ ຂະແໜງຊົນລະປະທານ ທີ່ໃກ້ຈະໝົດອາຍຸ.
3. ໃບທະບຽນອາກອນພາຍໃນ ທີ່ໃກ້ຈະໝົດອາຍຸ.
4. ໃບທະບຽນວິສະຫະກິດ.
5. ໃບສະຫຼູບຜົນງານໃນໜຶ່ງປີຜ່ານມາພ້ອມໃຫ້ມີການຢັ້ງຢືນຈາກຂະແໜງການ ຫຼື ເຈົ້າຂອງໂຄງການຄັກແນ່.
6. ໃບຢັ້ງຢືນກວດກາຄຸນນະພາບການກໍ່ສ້າງພ້ອມໃຫ້ມີການຢັ້ງຢືນຈາກຂະແໜງການຫຼື ເຈົ້າຂອງໂຄງການຄັກແນ່.
7. ໃບດຸ່ນດ່ຽງລາຍຮັບ-ລາຍຈ່າຍປະຈຳປີ.
8. ຮູບຂະໜາດ 3x4 ຈຳນວນ 4 ແຜ່ນ.
9. ສັນຍາຜູກພັນລະຫວ່າງວິຊາການ ແລະບໍລິສັດ ພ້ອມຊີວະປະຫວັດຫຍໍ້ ຂອງພະ ນັກງານວິຊາການ, ແລະໃບຢັ້ງຢືນຜ່ານງານ
10. ບັນຊີຊັບສິນບັດຄົງທີ່ ພ້ອມດ້ວຍອຸປະກອນເຄື່ອງມື, ໂດຍການຢັ້ງຢືນກຳມະສິດຈາກອົງການກ່ຽວຂ້ອງ ແລະ ພະແນກຄົມມະນາຄົມ.
11. ບັນຊີພະນັກງານ ແລະໂຄງຮ່າງການຈັດຕັ້ງ ຂອງບໍລິສັດ.

**ມາດຕາ 11:** ການຈັດຊັ້ນ, ຂັ້ນຄູ້ມຄອງບໍລິສັດ.

ບົນພື້ນຖານເງື່ອນໄຂ, ຫຼັກການ ແລະ ເອກະສານທີ່ປະກອບໄປນັ້ນເຫັນວ່າຄົບຖ້ວນ ແລະ ຖືກຕ້ອງຕາມລະບຽບຫຼັກການແລ້ວ, ກົມຊົນລະປະທານ ຫຼື ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ກຳແພງນະຄອນ ຫຼືເຂດພິເສດ ຈຶ່ງຈະຄົ້ນຄວ້າ ແລະ ພິຈາລະນາໃຫ້ພາຍໃນກຳນົດ 30 ວັນ ນັບແຕ່ມື້ຂະແໜງການໄດ້ຮັບຄຳຮ້ອງ, ພອ້ມດຽວກັນກໍ່ຈະໄດ້ຈັດຊັ້ນ ບໍລິສັດ, ໂດຍ ອີງໃສ່ ມາດຖານ, ຄວາມສາມາດ, ຕົ້ນທຶນ, ສະພາບປະລິມານ ຄຸນນະພາບ ພາຫະນະກົນ ຈັກ, ວັດຖຸ ອຸປກອນເຄື່ອງມືຮັບໃຊ້ຕ່າງໆ.

ຈຸດປະສົງຂອງການຈັດຊັ້ນຄຸ້ມຄອງ, ແມ່ນແນ່ໃສ່ການຈັດລະດັບຄວາມເໝາະສົມ ຂອງໂຄງການ ຫຼື ໜ້າວຽກໃດໜຶ່ງ ເພື່ອປະມູນ ແລະທາບທາມລາຄາ, ຕາມມູນຄ່າທີ່ໄດ້ກຳ ນົດໃຫ້ແຕ່ລະຊັ້ນ.

| ຊັ້ນ | ຂະໜາດໂຄງການ | ການອອກໃບອະນຸຍາດ ແລະຂໍ່ຕໍ່ໃບອະນຸຍາດ | ການປະມູນແລະທາບທາມລາຄາ |
|---|---|---|---|
| 1 | ໃຫ່ຍ> 1000 ຮຕ | ກະຊວງ ກະສິກຳ ແລະປ່າໄມ້ ກົມຊົນລະປະທານ | ກະຊວງກະສິກຳແລະປ່າໄມ້, ກົມຊົນລະປະທານເຂົ້າຮ່ວມ ປະກອບຄຳເຫັນທາງດ້ານວິຊາການ |
| 2 | ກາງ ≤1000 ຮຕ | ກະຊວງ ກະສິກຳ ແລະປ່າໄມ້ ກົມຊົນລະປະທານ | ພະແນກກະສິກຳແລະ ປ່າໄມ້ແຂວງ (ຂະແໜງຊົນລະປະທານ) ລາຍງານໃຫ້ກົມຊົນລະປະທານ |
| 3 | ນ້ອຍ ≤ 100 ຮຕ | ພະແນກ ກະສິກຳ ແລະປ່າໄມ້ (ຂະແໜງຊົນລະປະທານ ) | ຂະແໜງຊົນລະປະທານ ແຂວງ, ກຳແພງ ຫຼື ເຂດພິເສດແຕ່ຕ້ອງ ລາຍງານກົມຊົນລະປະທານຊາບ |

## *ພາກທີ່ III.*

## ວ່າດວ້ຍບາງຫຼັກການ ດຳເນີນຂອງບໍລິສັດ.

**ມາດຕາ 12:** ສິດໃນການເຂົ້າປະມູນ ແລະ ທາບທາມລາຄາ.

"ບກສຊ" ທີ່ມີໃບທະບຽນວິສະຫະກິດ ແລະໃບອະນຸຍາດດຳເນີນ ທຸລະກິດ ຂະແໜງ ຊົນລະປະທານ ເປັນທາງການແລ້ວ,ຈຶ່ງຈະມີສິດ ຍື່ນເອກະສານຂໍສະໝັກເຂົ້າຮ່ວມແຂ່ງຂັນ ການປະມູນ ຫຼື ທາບທາມລາຄາວຽກງານ ຂອງຂະແໜງການຊົນລະປະທານ.

**ມາດຕາ 13:** ສັນຍາປະຕິບັດວຽກງານ.

ກ່ອນຈະປະຕິບັດທຸກກິດຈະການກ່ຽວກັບການ ກໍ່ສ້າງ ແລະສ້ອມແປງ ຊົນລະປະທານ, ຕ້ອງມີສັນຍາລະຫວ່າງຜູ້ຮັບເໝົາ ກັບ ເຈົ້າຂອງໂຄງການຄັກແນ່.

**ມາດຕາ 14:** ພາຫະນະກົນຈັກ, ວັດຖຸອຸປະກອນ, ເຄື່ອງມືຮັບໃຊ້ຕ່າງໆ.

ຈຳນວນພາຫະນະກົນຈັກ, ວັດຖຸອຸປະກອນ, ເຄື່ອງມືຮັບໃຊ້ຕ່າງໆທີ່ຈຳເປັນ ແລະຈະນຳໃຊ້ເຂົ້າໃນວຽກງານ ກໍ່ສ້າງຊົນລະປະທານນັ້ນ ຈະຕອ້ງມີຄຸນນະພາບດີ ແລະ ໃນສະພາບທີ່ໃຊ້ການໄດ້ ຊຶ່ງໄດ້ກຳນົດໄວ້ໃນຕາຕະລາງຊອ້ນທ້າຍ.

**ມາດຕາ 15:** ການຮັບປະກັນວຽກງານ

ທຸກກິດຈະການ ຊົນລະປະທານທີ່ບໍລິສັດ " ບກສຊ" ໄດ້ດຳເນີນການຈັດຕັ້ງປະຕິບັດໄປແລ້ວນັ້ນ, "ບກສຊ" ຕ້ອງເປັນຜູ້ຮັບປະກັນຄຸນນະພາບຈົນກວ່າກິດຈະສຳເລັດແລະນຳໃຊ້ໄດ້ (ສ່ວນການກຳນົດເທົ່າໃດປີ ແມ່ນໃຫ້ລະບຸໄວ້ໃນສັນຍາ).

*ພາກທີ IV.*

ວ່າດວ້ຍສິດຂອງ ກະຊວງ ກະສິກຳ ແລະປ່າໄມ້
ກົມຊົນລະປະທານ, ພະແນກກະສິກຳ ແລະ ປ່າໄມ້, ຂະແໜງຊົນລະປະທານ ແຂວງ,
ກຳແພງນະຄອນ ແລະ ເຂດພິເສດແລະ ບາງມາດຕາການຕໍ່ຜູ້ລະເມີດກົດລະບຽບສະບັບນີ້.

**ມາດຕາ 16:** ສິດ ແລະ ໜ້າທີ່ຂອງຂະແໜງການ.

ກະຊວງ ກະສິກຳ ແລະປ່າໄມ້ ກົມຊົນລະປະທານ ແລະພະແນກ ກະສິກຳ ແລະປ່າໄມ້, ຂະແໜງຊົນລະປະທານ ແຂວງ, ກຳແພງນະຄອນ ແລະ ເຂດພິເສດ ມີສິດຂອບເຂດດັ່ງນີ້:

- ເປັນເສນາທິການໃຫ້ແກ່ຂັ້ນເທິງ ເພື່ອຮັບປະກັນການຈັດຕັ້ງປະຕິບັດລະບຽບຫຼັກການ, ກົດໝາຍຂອງລັດ ແລະມາດຖານເຕັກນິກຕ່າງໆທີ່ກ່ຽວຂ້ອງ.
- ກະຊວງ ກະສິກຳ ແລະປ່າໄມ້ ກົມຊົນລະປະທານ ພອ້ມດ້ວຍຂະແໜງການຂອງຕົນຢູ່ແຂວງ, ກຳແພງນະຄອນ ແລະ ເຂດພິເສດ, ສາມາດສົ່ງນັກວິຊາການຂອງຕົນ ລົງຕິດຕາມກວດກາ, ເກັບກຳສະພາບການເຄື່ອນໄຫວຂອງ ບກສຊ ພອ້ມດວ້ຍຂໍ້ມູນສະຖິຕິຂ່າວສານຕ່າງໆໄດ້ທຸກເວລາ.
- ມີສິດສະເໜີປັບປຸງ, ຍຸບເລີກ "ບກສຊ" ໃນກໍລະນີທີ່ຂັດກັບລະບຽບການສະບັບນີ້.

*ສິດ ແລະ ໜ້າທີ່ຂອງຂະແໜງການໃນການອອກໃບອະນຸຍາດການເຄື່ອນໄຫວ :*

- ຂັ້ນ 1 ແລະຂັ້ນ 2: ກະຊວງ ກະສິກຳ ແລະປ່າໄມ້ ກົມຊົນລະປະທານ.

- ຊັ້ນ 3 : ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ກຳແພງນະຄອນ, ເຂດພິເສດ, ແຕ່ຕ້ອງລາຍງານໃຫ້ກົມ ຊົນລະປະທານຊາບນຳ .

**ມາດຕາ 17: ມາດຕາການຕໍ່ຜູ້ລະເມີດລະບຽບຫຼັກການສະບັບນີ້.**

1. ພາກສ່ວນໃດ, ບຸກຄົນ, ຫຼືນິຕິບຸກຄົນ ຫາກໄປຮັບເໝົາໂຄງການກໍ່ສ້າງ-ສ້ອມແປງກິດຈະການຊົນລະປະທານໃດນຶ່ງ ໂດຍບໍ່ມີໃບອະນຸຍາດ ດຳເນີນ ທຸລະກິດ ດ້ານຊົນລະປະທານຢ່າງຄົບຖ້ວນຖືກຕ້ອງຕາມລະບຽບຫຼັກການສະບັບນີ້, ກົມຊົນລະປະທານ, ພະແນກ ກະສິກຳ ແຂວງ, ກຳແພງ ຫຼືເຂດພິເສດ ຈະບໍ່ຮັບຮອງ ແລະ ບໍ່ຮັບຮູ້ໃບອະນຸມັດຜົນ ຂອງການກໍ່ສ້າງ, ພ້ອມທັງປັບໃໝ10-15% ຂອງມູນຄ່າທັງໝົດຂອງໂຄງ ການ.
2. ໃນກໍລະນີ "ບກສຊ" ໃດໜຶ່ງຫາກລະເມີດຕໍ່ເນື້ອໃນລະບຽບການສະບັບນີ້ ຈະຖືກປັບໃໝຕາມລະບຽບການຂອງກະຊວງການເງິນ ຫຼື ຂະແໜງການທີ່ກ່ຽວຂ້ອງໄດ້ວາງອອກ.

**ມາດຕາ 18: ການຍຸບເລີກ ບກສຊ .**

ໃນກໍລະນີມີຄວາມຈຳເປັນຈະຕ້ອງຍຸບເລີກ " ບກສຊ" ຫຼື ມີການປ່ຽນແປງຮູບການໃໝ່ ຈະຕ້ອງໄດ້ນຳສະເໜີຕໍ່ເຈົ້າໜ້າທີ່ກ່ຽວຂ້ອງຕາມຂັ້ນຕອນ( ເນື້ອໃນກົດໝາຍວ່າດ້ວຍ ການລົ້ມລະລາຍວິສະຫະກິດ ) ເພື່ອປະກາດເປັນທາງການ ແລະຈະຕ້ອງແກ້ໄຂທຸກບັນຫາທີ່ຄົງຄ້າງກັບພາກສ່ວນອື່ນໃຫ້ສຳເລັດເສັຍກ່ອນ, ຫຼັງຈາກນັ້ນ 60 ວັນເຈົ້າໜ້າທີ່ກ່ຽວຂ້ອງຈຶ່ງຈະອອກໃບຍຸບເລີກເພື່ອໃຫ້, "ບກສຊ" ສາມາດຖອນເງິນຄ້ຳປະກັນ 3% (ຫຼືຫຼາຍກວ່າ) ຂອງຕົນທີ່ມີຢູ່ທະນາຄານ.

ໃນຂະນະທີ່ "ບກສຊ" ໄດ້ຍື່ນໃບຄຳຮ້ອງ ຂໍຍຸບເລີກໄປແລ້ວນັ້ນ ແມ່ນບໍ່ມີສິດເຄື່ອນໄຫວເດັດຂາດ ແລະໃນກໍລະນີມີການປ່ຽນແປງຮູບການ ດຳເນີນ "ບກສຊ" ຈະບໍ່ສິດຖອນເງິນຄ້ຳປະກັນ.

**ມາດຕາ 19: ການຕໍ່ໃບອະນຸຍາດ ດຳເນີນ ທຸລະກິດ.**

ກະຊວງ ກະສິກຳ ແລະປ່າໄມ້ ກົມຊົນລະປະທານ, ພະແນກ ກະສິກຳແຂວງ ກຳແພງນະຄອນ ຫຼືເຂດພິເສດ ຕໍ່ໃບອະນຸຍາດ ດຳເນີນການເຄື່ອນໄຫວໃຫ້ ກໍ່ຕໍ່ເມື່ອໃບອະນຸຍາດຂອງບໍລິສັດ ໝົດອາຍຸຄົບ 1 ປີ ແລະ ບໍ່ມີບັນຫາໃດໆ ກັບຂະແໜງການອື່ນ .

## *ພາກທີ V*

## ວ່າດ້ວຍການຈັດຊັ້ນ ຂອງບໍລິສັດ ກໍ່ສ້າງ ແລະ ສ້ອມແປງ ຊົນລະປະທານ .

ການຈັດຊັ້ນທະບຽນ ບໍລິສັດແມ່ນອີງໃສ່ ປະລິມານ ແລະຄຸນນະພາບຂອງເຄື່ອງມື, ອຸປະກອນ ພາຫະນະກົນຈັກຕ່າງໆ ເພື່ອໃຫ້ເໝາະສົມກັບໜ້າວຽກ ຫຼື ກິດຈະການໃດໜຶ່ງ ປະຕິບັດໃຫ້ໄດ້ຕາມກຳນົດເວລາຄາດໝາຍ ຮັບປະກັນທາງດ້ານເຕັກນິກ, ຄຸນນະພາບ. ດັ່ງນັ້ນ ການກຳນົດຊັ້ນທະບຽນບໍລິສັດ ຈຶ່ງແບ່ງອອກເປັນ 3 ຊັ້ນ.

ມາດຕາ 20: ສິດຂອບເຂດ ການຮັບເໝົາຂະໜາດໂຄງການ ແລະການເຄື່ອນໄຫວ:

ສິດຂອບເຂດໃນການຮັບວຽກ ຕາມແຕ່ລະຊັ້ນ ຂອງບໍລິສັດ ກໍ່ສ້າງ ແລະສ້ອມແປງຊົນລະປະທານ:

- ຊັ້ນທີ 1 ຮັບເໝົາໄດ້ທຸກກິດຈະການ ຫຼື ໄດ້ໝົດໂຄງການ ( ລວມທັງໂຄງການໃຫຍ່, ກາງ ແລະ ຂະໜາດນ້ອຍ ) ມີສິດ ດຳເນີນ ທຸລະກິດໄດ້ທົ່ວປະເທດ.

- ຊັ້ນທີ 2 ຮັບເໝົາໄດ້ບາງສ່ວນຂອງກິດຈະການ ແລະໂຄງການ ຫຼື ຂຶ້ນກັບຂະໜາດຂອງໜ້າວຽກ ຫຼືໝົດໂຄງການ ແລະທຸກໆໂຄງການຂະໜາດກາງ ແລະ ຂະໜາດນ້ອຍ ແລະ ມີສິດ ເຄື່ອນໄຫວໄດ້ໃນທົ່ວປະເທດ.

- ຊັ້ນທີ 3 ຮັບເໝົາສ້ອມແປງໄດ້ບາງສ່ວນ ຂອງກິດຈະການ ແລະ ຮັບເໝົາກໍ່ສ້າງກິດຈະການຂະໜາດນ້ອຍ, ບາງສ່ວນຂອງໂຄງການ ແລະມີສິດເຄື່ອນໄຫວໄດ້ ສະເພາະແຂວງ, ກຳແພງນະຄອນ ຫລືເຂດພິເສດ ທີ່ອອກໃບອະນຸຍາດດຳເນີນ ທຸລະກິດໃຫ້.

## <u>ການກຳນົດຊັ້ນທະບຽນທຸລະກິດ ແລະເງື່ອນໄຂ ຂອງບໍລິສັດກໍ່ສ້າງ ແລະສ້ອມແປງ ຊົນລະປະທານ (ຕາຕະລາງ1)</u>

| ລາຍການ | ຫົວໜ່ວຍ | ຊັ້ນ 1 | ຊັ້ນ 2 | ຊັ້ນ 3 | ໝາຍເຫດ |
|---|---|---|---|---|---|
| <u>*ອຸປະກອນ ຮັບໃຊ້ວິຊາການ*</u> | | | | | |
| ກ້ອງ ມຸມທຳມະດາ | ຊຸດ | 2 | 1 | 1 | ຄຸນນະພາບ |
| ກ້ອງ ລະດັບ | ຊຸດ | 2 | 1 | 1 | ພາຫະນະກົນຈັກ |
| ເຄື່ອງແທກເນື້ອທີ່ (PLANIMETER) | ຊຸດ | 2 | 1 | 1 | 80 % ຂຶ້ນໄປ. |
| ເຄື່ອງແຕ້ມແບບ (LETTERING) | ຊຸດ | 2 | 1 | 1 | |
| ໂຕະແຕ້ມແບບ | ຊຸດ | 2 | 1 | 1 | |
| ຄອມພິວເຕີ | ຊຸດ | 2 | 2 | 1 | |
| ເຄື່ອງກວດກາຄວາມອັດແໜ້ນດິນ | ຊຸດ | 5 | 3 | 2 | |
| ເຄື່ອງກວດກາການຍຸບໂຕເບຕົງ | ຊຸດ | 5 | 3 | 2 | |
| <u>ຈັດຊັ້ນຕາມຄວາມສາມາດຂອງງານ</u> | | | | | |
| ວຽກດິນ | $m^3$/ປີ | 300,000 | $1,5x10^5$-$3x10^5$ | $1,5x10^5$ | |
| ວຽກເບຕົງ | $m^3$/ປີ | 2000 | $1x10^3$-$2x10^3$ | $10^3$ | |
| <u>*ພາຫະນະ ກົນຈັກ ໜັກ*</u> | | | | | |
| ລົດຂຸດ | ຄັນ | 3 | 2 | 0 | |
| ລົດກວດ | ຄັນ | 3 | 2 | 0 | |
| ລົດຕັກ | ຄັນ | 3 | 1 | 0 | |
| ລົດຈົກບ່ວງໂຕ U ແລະຮູບຄາງໝູ | ຄັນ | 3 | 1 | 1 | |
| ລົດໂລ ຕີນກົ້ງແບບສັ່ນສະເທືອນ | ຄັນ | 3 | 1 | 1 | |
| ລົດໂລດິນແກະສັ່ນສະເທືອນ | ຄັນ | 3 | 1 | 0 | |
| ລົດເທົ່າດິນ | ຄັນ | 15 | 7 | 3 | |
| ລົດນ້ຳ | ຄັນ | 3 | 2 | 1 | |
| ລົດລາກ | ຄັນ | 1 | 1 | 0 | |
| ລົດຂົນສົ່ງ ພ້ອມແຂນຍົກ | ຄັນ | 1 | 1 | 0 | |
| ລົດຂົນສົ່ງ | ຄັນ | 1 | 1 | 0 | |
| ລົດຍົກ 10 - 20 ໂຕນ | ຄັນ | 1 | 0 | 0 | |
| ລົດ ນ້ຳມັນ | ຄັນ | 1 | 1 | 0 | |
| ລົດໂມ້ເບຕົງ | ຄັນ | 2 | 1 | 0 | |
| ເຄື່ອງຕອກເສົາເຂັມ | ຄັນ | 1 | 0 | 0 | |
| <u>*ພາຫະນະ ຮັບໃຊ້*</u> | | | | | |
| ລົດກະບະ | ຄັນ | 2 | 1 | 1 | |
| ລົດຈັກ | ຄັນ | 4 | 2 | 2 | |
| <u>*ເຄື່ອງມືກໍ່ສ້າງ*</u> | | | | | |
| ຈັກ ປະສົມເບຕົງ | ໜ່ວຍ | 3 | 2 | 1 | |
| ເຄື່ອງສັ່ນເບຕົງ | ໜ່ວຍ | 3 | 2 | 1 | |
| ຈັກສູບນ້ຳ | ໜ່ວຍ | 3 | 1 | 1 | |
| ຈັກໄຟຟ້າ | ໜ່ວຍ | 3 | 1 | 0 | |
| ເຄື່ອງເຈາະຫີນ | ໜ່ວຍ | 3 | 0 | 0 | |

ການກໍານົດຊັ້ນທະບຽນທຸລະກິດ ແລະເງື່ອນໄຂ ສ້າງຕັ້ງບໍລິສັດ " ບສອຊ" .(ຕາຕະລາງທີ 2)

| ລຳດັບ | ລາຍການ | ຊັ້ນ1 | ຊັ້ນ2 | ຊັ້ນ3 |
|---|---|---|---|---|
| | | ຈຳນວນ | ຈຳນວນ | ຈຳນວນ |
| 1 | ກ້ອງວັດແທກມູມແລະໄລຍະແບບເອເລັກໂຕນິກ | 2 ຊຸດ | 1 | 0 |
| 2 | ກ້ອງມູມທຳມະດາ | 5 ຊຸດ | 4 | 3 |
| 3 | ກ້ອງ ລະດັບ | 5 ຊຸດ | 4 | 3 |
| 4 | ເຄື່ອງວັດແທກເນື້ອທີ່ໃນແຜນທີ່(PLANIMETER) | 2 ເຄື່ອງ | 1 | 1 |
| 5 | ເຄື່ອງແຕ້ມແບບ(LETTERING) | 2 ຊຸດ | 2 | 2 |
| 6 | ໂຕະແຕ້ມແບບ | 3 ຊຸດ | 2 | 1 |
| 7 | ຄອມພິມເຕີ | 3 ຊຸດ | 2 | 1 |
| 8 | ຊອບແວຣສຳລັບTOPO AND DESIGN) | 1 ຊຸດ | 1 | 0 |
| 9 | ເຄື່ອງພິມແບບ AoຫຼືA1ແລະA3 | 1 ຊຸດ | 1 | 1 |
| 10 | ເຄື່ອງເຈາະຊັ້ນດິນດ້ວຍມື(HAND AUGER) | 2 ອັນ | 1 | 0 |
| 11 | ລົດເຈາະຊັ້ນດິນ | 1 ຄັນ | 0 | 0 |
| 12 | ພາຫະນະຮັບໃຊ້ (ລົດກະບະ) | 2 ຄັນ | 1 | 1 |

## ການກຳນົດພື້ນຖານອຸປະກອນ ແລະເງື່ອນໄຂສຳຄັນ ບໍລິສັດ ສຳຫຼວດ-ອອກແບບ ຊົນລະປະທານ . ( ຕາຕະລາງ ທີ 1 )

| ລ/ດ | ລາຍການ | ຫົວໜ່ວຍ | ຂັ້ນ 1 | ຂັ້ນ 2 | ຂັ້ນ 3 | ໝາຍເຫດ |
|---|---|---|---|---|---|---|
| 1. | ອຸປະກອນ...ເຄື່ອງມືຮັບໃຊ້ວິຊາການ | | | | | |
| 1 | ກ້ອງວັດແທກມູມ ແລະໄລຍະແບບເອເລັກໂຕຣນິກ( EDM ; Electronic Distance Measurement ) ຫຼື Total station | ຊຸດ | ≥ 2 | ≥ 1 | 0 | |
| 2 | ກ້ອງມູມທຳມະດາ | ຊຸດ | ≥5 | ≥4 | ≥3 | |
| 3 | ກ້ອງລະດັບ | ຊຸດ | ≥5 | ≥4 | ≥3 | |
| 4 | ເຄື່ອງວັດແທກເນື້ອທີ່ໃນແຜນທີ່ (PLANIMETER) | ຊຸດ | ≥2 | ≥1 | ≥1 | |
| 5 | ເຄື່ອງແຕ້ມແບບ (LETTERING) | ຊຸດ | ≥2 | ≥2 | ≥2 | |
| 6 | ໂຕະແຕ້ມແບບ | ຊຸດ | ≥3 | ≥2 | ≥1 | |
| 7 | ຄອມພິວເຕີ | ຊຸດ | ≥3 | ≥2 | ≥1 | |
| 8 | ຊອບແວສຳລັບ TOPO AND DESIGN | ຊຸດ | ≥1 | ≥1 | 0 | |
| 9 | ເຄື່ອງພິມແບບ A0ຫຼືA1 ແລະ A3 | ຊຸດ | ≥1 | ≥1 | 0 | |
| 10 | ເຄື່ອງເຈາະຊັ້ນດິນດ້ວຍມື ( HAND AUGEG ) | ຊຸດ | ≥2 | ≥1 | ≥1 | |
| 11 | ເຄື່ອງຈັກເຈາະຊັ້ນດິນ | ຊຸດ | ≥1 | | | |
| 12 | ພາຫະນະຮັບໃຊ້ (ລົດກະບະ) | ຄັນ | ≥2 | ≥1 | ≥1 | |
| 13 | ບຸກຄະລາກອນ | | | | | |
| - | ວິຊາການຄິດໄລ່ | ຄົນ | >3ສູງ ,ກາງ 5 | >ສູງ2,ກາງ 3 | >ສູງ 1,ກາງ 2 | |
| - | ວິຊາການສຳຫຼວດພູມສາດ | ຄົນ | >3ສູງ ,ກາງ 3 | >ສູງ2,ກາງ 4 | >ສູງ 1,ກາງ 3 | |
| - | ວິຊາການສຳຫຼວດທໍລະນີສາດ | ຄົນ | >3ສູງ ,ກາງ 3 | >ສູງ2,ກາງ 3 | >ສູງ 1,ກາງ 2 | |

ສຳລັບ ບໍລິສັດທີ່ຈະໄດ້ຮັບໃບອະນຸຍາດດຳເນີນທຸລະກິດສຳຫຼວດ-ອອກແບບ ຊປທ:

ຂັ້ນ: 1 — ວິສະວະກອນ ຊົນລະປະທານຕ້ອງມີປະສົບການ ຢ່າງໜ້ອຍ 5 ປີ
ພະນັກງານຊົນລະປະທານຂັ້ນກາງ ຕ້ອງມີປະສົບການຢ່າງໜ້ອຍ 3ປີ

ຂັ້ນ:2 — ວິສະວະກອນ ຊົນລະປະທານຕ້ອງມີປະສົບການ ຢ່າງໜ້ອຍ 4 ປີ
ພະນັກງານຊົນລະປະທານຂັ້ນກາງ ຕ້ອງມີປະສົບການຢ່າງໜ້ອຍ 3ປີ

ຂັ້ນ: 3 — ວິສະວະກອນ ຊົນລະປະທານຕ້ອງມີປະສົບການ ຢ່າງໜ້ອຍ 3 ປີ
ພະນັກງານຊົນລະປະທານຂັ້ນກາງ ຕ້ອງມີປະສົບການຢ່າງໜ້ອຍ 3ປີ

ການກຳນົດຊັ້ນທະບຽນທຸລະກິດ ແລະເງື່ອນໄຂ ຂອງບໍລິສັດກໍ່ສ້າງ ແລະສ້ອມແປງ ຊົນລະປະທານ (ຕາຕະລາງ2)

| ລ/ດ | ລາຍການ | ຊັ້ນ1 | ຊັ້ນ 2 | ຊັ້ນ 3 |
|---|---|---|---|---|
| | | ຈຳນວນ | ຈຳນວນ | ຈຳນວນ |
| I. | ອຸປະກອນ ຮັບໃຊ້ວິຊາການ | | | |
| 1 | ກ້ອງ ມູມທຳມະດາ | 2 | 1 | 1 |
| 2 | ກ້ອງ ລະດັບ | 2 | 1 | 1 |
| 3 | ເຄື່ອງແທກເນື້ອທີ່ (PLANIMETER) | 2 | 1 | 1 |
| 4 | ເຄື່ອງແຕ້ມແບບ (LETTERING) | 2 | 1 | 1 |
| 5 | ໂຕະແຕ້ມແບບ | 2 | 1 | 1 |
| 6 | ຄອມພິວເຕີ | 2 | 2 | 1 |
| 7 | ເຄື່ອງກວດກາຄວາມອັດແໜ້ນດິນ | 5 | 3 | 2 |
| 8 | ເຄື່ອງກວດກາການຍຸບໂຕເບຕົງ | 5 | 3 | 2 |
| II. | ພາຫະນະ ກົນຈັກ ໜັກ | | | |
| 1 | ລົດດຸດ | 3 | 2 | 0 |
| 2 | ລົດກວດ | 3 | 2 | 0 |
| 3 | ລົດຕັກ | 3 | 1 | 0 |
| 4 | ລົດຈົກບ່ວງໂຕ U ແລະຮູບຄາງໝູ | 3 | 1 | 1 |
| 5 | ລົດໂລ ຕີນກົງແບບສັ່ນສະເທືອນ | 3 | 1 | 1 |
| 6 | ລົດໂລຕີນແກະສັ່ນສະເທືອນ | 3 | 1 | 0 |
| 7 | ລົດແກ່ດິນ | 15 | 7 | 3 |
| 8 | ລົດນ້ຳ | 3 | 2 | 1 |
| 9 | ລົດລາກ | 1 | 1 | 0 |
| 10 | ລົດຂົນສົ່ງ ພ້ອມແຂນຍົກ | 1 | 1 | 0 |
| 11 | ລົດຂົນສົ່ງ | 1 | 1 | 0 |
| 12 | ລົດຍົກ 10 - 20 ໂຕນ | 1 | 0 | 0 |
| 13 | ລົດ ນ້ຳມັນ | 1 | 1 | 0 |
| 14 | ລົດໂມ້ເບຕົງ | 2 | 1 | 0 |
| 15 | ເຄື່ອງຕອກເສົາເຂັມ | 1 | 0 | 0 |
| III. | ພາຫະນະ ຮັບໃຊ້ | | | |
| 1 | ລົດກະບະ | 2 | 1 | 1 |
| 2 | ລົດຈັກ | 4 | 2 | 2 |
| IV. | ເຄື່ອງ ກໍ່ສ້າງ | | | |
| 1 | ຈັກ ປະສົມເບຕົງ | 3 | 2 | 1 |
| 2 | ເຄື່ອງສັ່ນເບຕົງ | 3 | 2 | 1 |
| 3 | ຈັກສູບນ້ຳ | 3 | 1 | 1 |

ການກຳນົດຊັ້ນທະບຽນ ທຸລະກິດ ແລະເງື່ອນໄຂ ດຳເນີນທຸລະກິດຂອງບໍລິສັດ "ບກຄຊ" (ຕາຕະລາງທີ 3 )

| ລ/ດ | ປະເພດອຸປະກອນ , ເຄື່ອງມືຮັບໃຊ້ວິຊາການ , ບຸກຄະລະກອນ | ຫົວໜ່ວຍ | ຊັ້ນ 1 | ຊັ້ນ 2 | ໝາຍເຫດ |
|---|---|---|---|---|---|
| I. | *ອຸປະກອນ , ເຄື່ອງມືຮັບໃຊ້ວິຊາການ* | | | | |
| 1 | ກ້ອງມູມແລະໄລຍະແບບເອເລັກໂຕຣນິກ ( EDM ) | ຊຸດ | 2 | 1 | |
| 2 | ກ້ອງມູມທຳມະດາ | ຊຸດ | 4 | 2 | |
| 3 | ກ້ອງລະດັບ | ຊຸດ | 5 | 3 | |
| 4 | ເຄື່ອງວັດແທກເນື້ອທີ່ໃນແຜນທີ່ (PLANIMETER) | ອັນ | 2 | 1 | |
| 5 | ເຄື່ອງແຕ້ມແບບ (LETTERING) | ຊຸດ | 2 | 1 | |
| 6 | ໂຕະແຕ້ມແບບ | ຊຸດ | 2 | 1 | |
| 7 | ຄອມພິວເຕີ + ຊອບແວ ສຳລັບ TOPO AND DESIGN | ຊຸດ | 2 | 1 | |
| 8 | ເຄື່ອງພິມແບບ A0 ຫຼື A1 ແລະA3 | ຊຸດ | 1 | 1 | |
| 9 | ເຄື່ອງເຈາະຊັ້ນດິນດ້ວຍມື ( HAND AUGER ) | ຊຸດ | 5 | 3 | |
| 10 | ເຄື່ອງກວດກາຄວາມອັດແໜ້ນຂອງດິນ | ຊຸດ | 5 | 3 | |
| 11 | ເຄື່ອງຫຼໍ່ເບຕົງເພື່ອເອົາໄປທົດລອງແຮງອັດຂອງເບຕົງ | ອັນ | 15 | 9 | |
| 12 | ເຄື່ອງວັດແທກການຫຍຸບໂຕຂອງເບຕົງ | ຊຸດ | 5 | 3 | |
| 13 | ຄອມພິວເຕີຊະນິດນ້ອຍ. ( NOTE BOOK ) | ຊຸດ | 1 | 1 | |
| 14 | ພາຫະນະຮັບໃຊ້ (ລົດກະບະ) | ຄັນ | 2 | 1 | |
| II. | *ບຸກຄະລາກອນ* | | | | |
| 1 | ວິຊາການນຄິດໄລ່ - ອອກແບບລະບົບຊົລະປະທານ | ຄົນ | ສູງ 3, ກາງ 3 | ສູງ 2 , ກາງ 3 | |
| 2 | ວິຊາການສຳຫລວດພູມສາດ | ຄົນ | ສູງ 3, ກາງ 5 | ສູງ 2 , ກາງ 4 | |
| 3 | ວິຊາການສຳຫລວດທໍລະນີສາດ ແລະ ເບຕົງ | ຄົນ | ສູງ 3, ກາງ 3 | ສູງ 2 , ກາງ 3 | |